ด่วนที่สุด

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເຈົ້າແຂວງອຸດົມໄຊ

ຄະນະສະເພາະກິດເພື່ອ ປ້ອງກັນ, ຄວບຄຸມ

ແລະ ແກ້ໄຂພະຍາດ ໂຄວິດ-19

ເລກທີ.529/ຈຂ.ອຊ

ອຸດົມໄຊ, ວັນທີ 08 ມິຖຸນາ 2021

## ແຈ້ງການ

**ເຖິງ:** ບັນດາທ່ານຫົວໜ້າພະແນກການ, ອົງການລັດທຽບເທົ່າ, ສອງກອງບັນຊາການ ປກຊ-ປກສ, ເຈົ້າເມືອງ 7 ເມືອງ, ຫົວໜ່ວຍທຸລະກິດ, ບໍລິສັດ, ຫ້າງຮ້ານ, ພໍ່ຄ້າຊາວຂາຍ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າພາຍໃນແຂວງອຸດົມໄຊ ທີ່ນັບຖື.

**ເລື່ອງ:** ສືບຕໍ່ປະຕິບັດມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການແຜ່ລະບາດ ຂອງເຊື້ອພະຍາດ ໂຄວິດ-19 ໃນໄລຍະວັນທີ 8-19 ມິຖຸນາ 2021.

- ອີງຕາມ ຄຳສັ່ງທ່ານນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021;
- ອີງຕາມ ຄຳສັ່ງແນະນຳຂອງທ່ານເຈົ້າແຂວງອຸດົມໄຊ ສະບັບເລກທີ 334/ຈຂ.ອຊ, ລົງວັນທີ 22 ເມສາ 2021;
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 595/ຫສນຍ, ລົງວັນທີ 4 ມິຖຸນາ 2021;
- ອີງຕາມ ຜົນຂອງກອງປະຊຸມ ຄະນະສະເພາະກິດ ເພື່ອປ້ອງກັນ ແລະ ຄວບຄຸມ ພະຍາດ COVID-19 ຂັ້ນແຂວງ ຄັ້ງວັນທີ 7 ມິຖຸນາ 2021.

ຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂ ການແຜ່ລະບາດຂອງພະຍາດໂຄວິດ-19 ແຂວງອຸດົມໄຊ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ ຜ່ານການຈັດຕັ້ງປະຕິບັດບັນດາມາດຕະການຕ່າງໆທີ່ທາງສູນກາງ ແລະ ແຂວງວາງອອກໃນໄລຍະຜ່ານມາເຫັນວ່າ ການຈັດຕັ້ງທຸກຂັ້ນ ແລະ ທຸກພາກສ່ວນໃນສັງຄົມ ໄດ້ປະຕິບັດ ສິດ ແລະ ພັນທະຂອງຕົນດ້ວຍຄວາມຮັບຜິດຊອບສູງ ຈຶ່ງເຮັດໃຫ້ການລະບາດມີທ່າອ່ຽງຫລຸດລົງ ແລະ ບໍ່ມີຜູ້ຕິດເຊື້ອໃໝ່. ເຖິງຢ່າງໃດກໍ່ຕາມ, ຍ້ອນທີ່ຕັ້ງຂອງແຂວງອຸດົມໄຊ ເປັນທາງຜ່ານຂອງບັນດາແຂວງພາກເໜືອທີ່ມີຄົນເດີນທາງຜ່ານເປັນຈຳນວນຫລວງຫຼາຍ ແລະ ມີສະພາບປະຊາຊົນສືບຕໍ່ເດີນທາງກັບຄືນພູມລຳເນົາ, ບວກໃສ່ສະພາບການລະບາດຂອງພະຍາດຢູ່ ນະຄອນຫລວງວຽງຈັນ ແລະ ບາງແຂວງ ຍັງສືບຕໍ່ ຈຶ່ງເຮັດໃຫ້ ແຂວງພວກເຮົາມີຄວາມສ່ຽງສູງໃນການຮັບເຊື້ອມາຈາກບ່ອນອື່ນ ແລ້ວ ສືບຕໍ່ລະບາດໃສ່ໃນຊຸມຊົນ. ເພື່ອເຮັດໃຫ້ບັນລຸຄາດໝາຍລວມໃນການຄວບຄຸມ ແລະ ແກ້ໄຂການແຜ່ລະບາດຂອງພະຍາດໂຄວິດ-19 ໃນທົ່ວແຂວງ ແລະ ເພື່ອໃຫ້ທຸກຄົນໃນສັງຄົມໄດ້ໃຊ້ຊີວິດປົກກະຕິພາຍໃຕ້ເງື່ອນໄຂວິຖີຊີວິດປົກກະຕິແບບໃໝ່, ຄະນະສະເພາະກິດປ້ອງກັນ, ຄວບຄຸມ ແລະ ແກ້ໄຂການແຜ່ລະບາດພະຍາດໂຄວິດ-19 ຈຶ່ງເຫັນດີ ສືບຕໍ່ປະຕິບັດມາດຕະການຕ່າງໆທີ່ລະບຸໃນ ຄຳສັ່ງ ເລກທີ 15/ນຍ, ລົງວັນທີ 21 ເມສາ 2021 ແລະ ຄຳສັ່ງ ສະບັບເລກທີ 334/ຈຂ.ອຊ, ລົງວັນທີ 22 ເມສາ 2021 ອອກໄປຕື່ມ 14 ວັນເລີ່ມແຕ່ ເວລາ 06:00 ໂມງເຊົ້າ ຂອງ



สแกนด้วย CamScanner

ວັນທີ 8 ມິຖຸນາ 2021 ຫາເວລາ 24:00 ໂມງ ຂອງວັນທີ 19 ມິຖຸນາ 2021 ຢ່າງເຂັ້ມງວດ. ພ້ອມກັນນັ້ນ, ຈະໄດ້ສືບຕໍ່ປະຕິບັດມາດຕະການທີ່ໄດ້ວາງອອກ ແລະ ຜ່ອນຜັນບາງມາດຕະການດັ່ງນີ້:

1. ມາດຕະການສືບຕໍ່ປະຕິບັດ:

1.1. ສືບຕໍ່ເຂັ້ມງວດການກວດກາ ແລະ ກັ່ນຕອງ ຄົນເຂົ້າ-ອອກ ເມືອງ ຢູ່ ຈຸດເຊື່ອມຕໍ່ ລະຫວ່າງ ແຂວງຕໍ່ແຂວງ ໃນຈຳນວນ 6 ຈຸດ (ຫລັກ 44, ທາງເຊື່ອມຕໍ່ ແຂວງຫລວງພະບາງ, ຈຸດບ້ານລາດຫານ ທາງເຊື່ອມຕໍ່ເມືອງປາກອູ ແຂວງຫລວງພະບາງ; ຫລັກ 50 ທາງເຊື່ອມຕໍ່ແຂວງຜົ້ງສາລີ; ຈຸດບ້ານນ້ຳແພງ ທາງເຊື່ອມຕໍ່ແຂວງຫລວງນ້ຳທາ; ຈຸດຂົວນ້ຳຂອງ ທາງເຊື່ອມຕໍ່ ແຂວງໄຊຍະບູລີ ແລະ ຈຸດບ້ານ ມົກສະຕອງ ທາງເຊື່ອມຕໍ່ແຂວງບໍ່ແກ້ວ). ສືບຕໍ່ຮັກສາຈຸດກັກບໍລິເວນ ຢູ່ແຂວງ ແລະ ບັນດາເມືອງຈຳນວນໜຶ່ງ;

1.2. ເພີ່ມທະວີໃນການຊອກຄົ້ນຫາຜູ້ສຳພັດ ແລະ ກຸ່ມສ່ຽງ ເພື່ອເກັບຕົວຢ່າງວິໄຈຫາເຊື້ອພະຍາດໃຫ້ທັນເວລາ; ປຸກລະດົມພາກສ່ວນຕ່າງໆທົ່ວສັງຄົມ ໃຫ້ເຂົ້າມາຮັບວັກຊີນຕາມຈຸດບໍລິການໃຫ້ວັກຊີນທີ່ທາງການກຳນົດໄວ້;

1.3. ປິດຮ້ານກິນ-ດື່ມ, ວົງດົນຕີ, ຮ້ານຄາຣາໂອເກະ, ສະຖານບັນເທີງ, ສວນອາຫານ, ສວນນ້ຳ, ສະຖານທີ່ທ່ອງທ່ຽວ, ຮ້ານນວດ-ສະປາ, ຮ້ານສະນຸກເກີ້, ສັງວຽນໄກ່, ຮ້ານອິນເຕີເນັດຄາເຟ, ຮ້ານເກມທຸກປະເພດ;

1.4. ປິດສູນກິລາໃນຮົ່ມທຸກປະເພດ, ພ້ອມທັງຫ້າມບໍ່ໃຫ້ຫລິ້ນກິລາທີ່ຮ່າງກາຍມີການສຳຜັດກັນ ເຊັ່ນ: ບານເຕະ, ຕີມວຍ ແລະ ອື່ນໆ ສຳລັບເຫດສະບານເມືອງໄຊ;

1.5. ປິດການຂົນສົ່ງໂດຍສານທາງບົກ, ທາງອາກາດ ລະຫວ່າງ ແຂວງອຸດົມໄຊ ໄປ ນະຄອນຫລວງວຽງຈັນ;

1.6. ຫ້າມບຸກຄົນ, ນິຕິບຸກຄົນ ເຂົ້າມາທ່ອງທ່ຽວ, ມາວຽກສ່ວນຕົວອື່ນໆ ຫລື ມາແວ່ພັກເຊົາ ຢູ່ພາຍໃນແຂວງອຸດົມໄຊ ໂດຍບໍ່ໄດ້ຮັບອະນຸຍາດຈາກຄະນະສະເພາະກິດແຂວງອຸດົມໄຊ, ຍົກເວັ້ນຜູ້ທີ່ສັກວັກຊີນຄົບ 2 ເຂັມ ຫລາຍກວ່າ 30 ວັນຂຶ້ນໄປ;

1.7. ໂຈະການນຳເຂົ້າແຮງງານຕ່າງປະເທດເຂົ້າມາແຂວງອຸດົມໄຊ, ຍົກເວັ້ນກໍລະນີຈຳເປັນທີ່ໄດ້ຮັບອະນຸຍາດຈາກຄະນະສະເພາະກິດຂັ້ນແຂວງ ແຕ່ຕ້ອງປະຕິບັດຕາມມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອຢ່າງເຂັ້ມງວດ;

1.8. ຫ້າມຈັດບຸນປະເພນີ, ກິດຈະກຳທາງສາສະໜາ, ງານດອງ, ງານຂຶ້ນເຮືອນໃໝ່, ງານອອກກຳ, ຈັດງານລ້ຽງສັງສັນ, ຊຸມແຊວທຸກຮູບແບບ ຫຼື ກິດຈະກຳຕ່າງໆ ຍົກເວັ້ນກໍລະນີຈຳເປັນເຊັ່ນ: ງານສົບ, ງານສົ່ງສະການ ແຕ່ໃຫ້ປະຕິບັດຕາມມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອພະຍາດ ຢ່າງເຂັ້ມງວດ;

1.9. ຫ້າມໂຄສະນາ, ເຜີຍແຜ່ ແລະ ສົ່ງຕໍ່ຂໍ້ມູນຂ່າວສານທີ່ບໍ່ມີມູນຄວາມຈິງໃນທຸກຮູບແບບ ຜ່ານສື່ຕ່າງໆ ເຊິ່ງເຮັດໃຫ້ມີຄວາມເຂົ້າໃຈຜິດ, ສົ່ງຜົນກະທົບທາງລົບຕໍ່ສັງຄົມ, ຖ້າລະເມີດຈະຖືກດຳເນີນຄະດີຕາມກົດໝາຍ.

1.10. ເຂັ້ມງວດໃນການປະຕິບັດມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອ ເຊັ່ນ: ວັດແທກອຸນຫະພູມ, ຮັກສາໄລຍະຫ່າງ, ໃສ່ຜ້າອັດປາກ-ດັງ, ລ້າງມືດ້ວຍນ້ຳສະອາດ ແລະ ໃສ່ສະບູ ຫລື ເຈວລ້າງມື;

1.11. ໃຫ້ຄະນະສະເພາະກິດຂັ້ນແຂວງ ແລະ ບັນດາເມືອງ ສືບຕໍ່ລະດົມທຶນ ແລະ ຮັບເອົາການຊ່ວຍເຫຼືອຕ່າງໆໃນສັງຄົມ ເພື່ອມານຳໃຊ້ເຂົ້າໃນວຽກງານປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການແຜ່ລະບາດຂອງເຊື້ອພະຍາດ COVID-19.

2. ມາດຕະການຜ່ອນຜັນ:

2.1. ອະນຸຍາດໃຫ້ພະນັກງານ-ລັດຖະກອນ, ທະຫານ, ຕຳຫລວດ, ລັດວິສາຫະກິດ-ເອກະຊົນ ແລະ ບັນດາບໍລິສັດໃນທົ່ວແຂວງອຸດົມໄຊ ມາປະຈຳການເປັນປົກກະຕິ;



สแกนด้วย CamScanner

2.2. ອະນຸຍາດໃຫ້ຈັດກອງປະຊຸມ ທີ່ມີຜູ້ເຂົ້າຮ່ວມບໍ່ເກີນ 50 ຄົນ ແຕ່ຕ້ອງປະຕິບັດມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອ ຢ່າງເຂັ້ມງວດ;

2.3. ອະນຸຍາດໃຫ້ເປີດສູນການຄ້າ, ຮ້ານຄ້າຂາຍຍົກ-ຂາຍຍ່ອຍ, ຊຸບເປີມາເກັດ, ມິນິມາດ, ຕະຫຼາດສົດ, ຕະຫຼາດຂາຍອາຫານ, ຮ້ານຕັດຜົມ, ຮ້ານເສີມສວຍ ບໍ່ໃຫ້ກາຍ 22:00 ໂມງ, ໂດຍໃຫ້ປະຕິບັດມາດຕະການການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອ;

2.4. ອະນຸຍາດໃຫ້ດຳເນີນການຂົນສົ່ງສິນຄ້າ ແລະ ຂົນສົ່ງໂດຍສານ ທາງບົກ, ທາງນ້ຳ ລະຫວ່າງ ແຂວງ ຕໍ່ແຂວງ. ໃນນີ້, ຜູ້ທີ່ສັກວັກຊີນຄົບ 2 ເຂັມ ຫລາຍກວ່າ 30 ວັນຂຶ້ນໄປຈະບໍ່ໄດ້ກັກກັນ 14 ວັນ, ແຕ່ຕ້ອງປະຕິບັດຕາມມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອ ຢ່າງເຂັ້ມງວດ. ນອກຈາກນັ້ນ, ທຸກຄົນທີ່ຈະເດີນທາງເຂົ້າມາແຂວງອຸດົມໄຊ ຕ້ອງໄດ້ຜ່ານມາດຕະການກັ່ນຕອງຄົນເຂົ້າ-ອອກ ຂອງແຂວງ ຢ່າງເຂັ້ມງວດ. ສຳລັບການຂົນສົ່ງສິນຄ້າ ແລະ ຂົນສົ່ງໂດຍສານ ທາງບົກ, ທາງນ້ຳ ລະຫວ່າງ ເມືອງ ຫາ ເມືອງ ພາຍໃນແຂວງແມ່ນອະນຸຍາດໃຫ້ດຳເນີນຢ່າງເປັນປົກກະຕິ;

2.5. ອະນຸຍາດເປີດບັນດາໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫົວໜ່ວຍຫັດຖະກຳ, ໂຮງງານຜະລິດສິນຄ້າບໍລິໂພກ, ຫົວຫນ່ວຍຜະລິດ ແລະ ບໍລິການອື່ນໆ, ແຕ່ຕ້ອງປະຕິບັດມາດຕະການປ້ອງກັນການຕິດເຊື້ອ ແລະ ມາດຕະການຂອງຄະນະສະເພາະກິດຂອງແຂວງວາງອອກຢ່າງເຂັ້ມງວດ;

2.6. ອະນຸຍາດເປີດການຮຽນ-ການສອນ ຢູ່ສະຖານການສຶກສາທຸກຊັ້ນທຸກສາຍ ແຕ່ຕ້ອງເຂັ້ມງວດໃນການປະຕິບັດມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອ; ສ່ວນຊັ້ນການສຶກສາກ່ອນໄວຮຽນ (ໂຮງຮຽນລ້ຽງເດັກ, ໂຮງຮຽນອະນຸບານ) ໃຫ້ສືບຕໍ່ໂຈະຈົນກວ່າຈະມີແຈ້ງການຕ່າງຫາກ;

2.7. ອະນຸຍາດໃຫ້ນັກສຶກສາແຂວງອຸດົມໄຊທີ່ສຳເລັດການສຶກສາຈາກຕ່າງປະເທດ ເຂົ້າມາແຂວງອຸດົມໄຊໄດ້ ແຕ່ຕ້ອງປະຕິບັດຕາມມາດຕະການກັ່ນຕອງ ແລະ ມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອຢ່າງເຂັ້ມງວດ;

2.8. ອະນຸຍາດໃຫ້ຍ່າງອອກກຳລັງກາຍຕາມສະຖານທີ່ຕ່າງໆ ແລະ ຫຼິ້ນກິລາກາງແຈ້ງ ທີ່ຮ່າງກາຍບໍ່ໄດ້ສຳຜັດກັນ ເຊັ່ນ ຍ່າງອອກກຳລັງກາຍ, ຂີ່ລົດຖີບ ແລະ ຕີກ໊ອບ ໂດຍໃຫ້ປະຕິບັດມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອຢ່າງເຂັ້ມງວດ;

2.9. ອະນຸຍາດໃຫ້ນັ່ງກິນ, ດື່ມ ຢູ່ຮ້ານອາຫານ, ຮ້ານກາເຟ ໂດຍປະຕິບັດມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອ ຢ່າງເຂັ້ມງວດ; ຫ້າມເປີດເພງ ແລະ ບໍລິການເຄື່ອງດື່ມທີ່ມີທາດເຫຼົ້າທຸກປະເພດ;

2.10. ອະນຸຍາດໃຫ້ ໂຮງແຮມ ແລະ ເຮືອນພັກ ເປີດຮັບແຂກໄດ້ ແຕ່ຕ້ອງເກັບກຳຂໍ້ມູນສ່ວນບຸກຄົນຂອງຜູ້ເຂົ້າພັກເຊົາດັ່ງນີ້: (1) ໜັງສືອະນຸຍາດເດີນທາງ, ຂໍ້ມູນບັດປະຈຳຕົວ, ໜັງສືຜ່ານແດນ, ບັດສັກຢາວັກຊີນປ້ອງກັນໂຄວິດ-19, ເບີໂທລະສັບ ແລະ ທະບຽນພາຫະນະເດີນທາງ. ທຸກກໍລະນີທີ່ເຂົ້າມາ, ເຈົ້າຂອງ ໂຮງແຮມ, ບ້ານພັກ ຕ້ອງລາຍງານຜ່ານໂທລະສັບສາຍດ່ວນ 081 166 ຫລື 081 165;

2.11. ອະນຸຍາດໃຫ້ບິນທະບາດຕາມເສັ້ນທາງ ແຕ່ໃຫ້ປະຕິບັດມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອຢ່າງເຂັ້ມງວດ.

3. ບຸກຄົນ ຫຼື ນິຕິບຸກຄົນໃດ ທີ່ລະເມີດມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການແຜ່ລະບາດຂອງພະຍາດ COVID-19 ທີ່ລັດຖະບານ, ຄະນະສະເພາະກິດ, ກະຊວງ - ອົງການ ຂັ້ນສູນກາງ ແລະ ແຂວງ ວາງອອກ ແມ່ນຈະຖືກດຳເນີນຄະດີ ແລະ ປັບໃໝ; ມອບໃຫ້ກຳລັງ ປກສ ສົມທົບກັບພາກສ່ວນກ່ຽວຂ້ອງ ລົງຕິດຕາມກວດກາ, ຖ້າພົບເຫັນກໍລະນີລະເມີດ ໃຫ້ດຳເນີນການເລີ່ມຈາກການເຮັດປຶດບັນທຶກສຶກສາອົບຮົມ ກ້າວໄປເຖິງການປັບໄໝແຕ່ເບົາ ຫາ ໜັກ ແລະ ດຳເນີນຄະດີຕາມລະບຽບກົດໝາຍ;



สแกนด้วย CamScanner

4. ມອບໃຫ້ຄະນະສະເພາະກິດຂັ້ນແຂວງ, ບັນດາພະແນກການ, ອົງການລັດທຽບເທົ່າ, ອົງການປົກຄອງເມືອງ ແລະ ອົງການປົກຄອງບ້ານ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສືບຕໍ່ເພີ່ມທະວີການນໍາພາ-ຊີ້ນໍາເຊື່ອມຊຶມແຈ້ງການສະບັບນີ້ ແລະ ເອກະສານອື່ນໆທີ່ກ່ຽວຂ້ອງໃຫ້ທົ່ວເຖິງ ເພື່ອພ້ອມກັນຈັດຕັ້ງປະຕິບັດຕາມມາດຕະການທີ່ກໍານົດໄວ້ຕາມຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ; ນອກຈາກນີ້, ຖ້າມີຄວາມຈໍາເປັນ ພາກສ່ວນກ່ຽວຂ້ອງສາມາດອອກນິຕິກໍາແນະນໍາເພີ່ມເຕີມໃນການຈັດຕັ້ງປະຕິບັດເປັນອັນລະອຽດ ຕາມພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດຂອງຕົນ. ການປະຕິບັດຕົວຈິງຫາກມີການປ່ຽນແປງ ຈະແຈ້ງໃຫ້ຊາບເປັນແຕ່ລະໄລຍະ.

5. ແຈ້ງການສະບັບນີ້ ມີຜົນສັກສິດ ແຕ່ ເວລາ 06:00 ໂມງເຊົ້າ ຂອງວັນທີ 8 ມິຖຸນາ 2021 ຫາເວລາ 24:00 ໂມງ ຂອງວັນທີ 19 ມິຖຸນາ 2021 ແລະ ປ່ຽນແທນໜັງສືແຈ້ງການສະບັບເລກທີ 524/ສພກ.ອຊ, ລົງວັນທີ 3 ມິຖຸນາ 2021 ແລະ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ, ຈິ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ຮອງເຈົ້າແຂວງອຸດົມໄຊ,
ຫົວໜ້າຄະນະສະເພາະກິດເພື່ອ ປ້ອງກັນ, ຄວບຄຸມ
ແລະ ແກ້ໄຂການລະບາດຂອງພະຍາດ ໂຄວິດ-19

ແຂວງອຸດົມໄຊ
ເຈົ້າແຂວງ

ສົມຈິດ ປັນຍາສັກ

ບ່ອນສົ່ງ:
- ຄະນະສະເພາະກິດຂັ້ນແຂວງ
- ຄະນະສະເພາະກິດຂັ້ນເມືອງ
- ພະແນກການ, ກົມກອງອ້ອມຂ້າງແຂວງ
- ອົງການຈັດຕັ້ງຕ່າງໆທົ່ວແຂວງ
- ສໍາເນົາ



สแกนด้วย CamScanner